ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການ

ເລກທີ 734 /ປທສ.ຫກ
ນະຄອນຫຼວງວຽງຈັນ, ວັນທີ 30 MAR 2016

# ແຈ້ງການ

**ຮຽນ:** ບັນດາຫ້ອງການ ກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ ແລະ ຜູ້ໃຫ້ບໍລິການ ດ້ານໂທລະຄົມມະນາຄົມ ແລະ ໄອຊີທີ ຢູ່ ສປປ ລາວ.

**ເລື່ອງ:** ການແຈ້ງເຫດສຸກເສີນທາງລະບົບຄອມພິວເຕີ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບ ເລກທີ 61/ສພຊ, ລົງວັນທີ 15/07/2015.

ຫ້ອງການ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຫົວໜ້າ ຫ້ອງການ, ອົງການທຽບເທົ່າ, ບັນດາ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນ ສປປ ລາວ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ ຊາບວ່າ : ຖ້າເກີດເຫດສຸກເສີນທາງລະບົບຄອມພິວເຕີ ໃນຂະແໜງການຂອງຕົນໃຫ້ແຈ້ງຫາ ໜ່ວຍງານ (ສູນ) ສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ເພື່ອລະງັບ, ຕອບໂຕ້, ແກ້ໄຂ, ກຳຈັດບໍ່ໃຫ້ຂະຫຍາຍເປັນບໍລິເວນກວ້າງ ແລະ ໃຫ້ຄຳປຶກສາທາງວິຊາການໃນການປ້ອງກັນ, ຊຶ່ງສາມາດແຈ້ງດ້ວຍວິທີການດັ່ງລຸ່ມນີ້:

- ແຈ້ງເຫດຜ່ານລະບົບອິນເຕີເນັດ ເວັບໄຊ໌: www.laocert.gov.la/Incident ຫຼື ອີເມວ: report@laocert.gov.la.
- ແຈ້ງເຫດທາງໂທລະສັບ ເບີໂທ: +856-30-5764222 ຫຼື ແຟັກ:+856-21-254150.

ດ້ວຍຄວາມເຄົາລົບ ແລະ ນັບຖື.

ຫົວໜ້າ ຫ້ອງການ

ບຸນສະເຫຼີມໄຊ ເຄນນາວົງ

ເອກະສານຄັດຕິດ:

- ແບບຟອມເປັນພາສາອັງກິດ
- ແບບຟອມເປັນພາສາລາວ
- ອະທິບາຍເຫດສຸກເສີນທາງລະບົບຄອມພິວເຕີ